Washington State Department of Social & Health Services

Transforming lives

# ໃບແຈ້ງການກ່ຽວກັບການກວດເບິ່ງເບື້ອງຫລັງອີງຕາມລາຍມື
# Fingerprint-Based Background Check Notice

**ລາຍລະອຽດກ່ຽວກັບການກວດເບິ່ງເບື້ອງຫລັງອີງຕາມລາຍມືຂອງທ່ານ:**

1. ກົມສັງຄົມສົງເຄາະ ແລະ ສາທາລະນະສຸກ (Department of Social and Health Services) ບົ່ງໃຫ້ທ່ານເຮັດການກວດເບິ່ງເບື້ອງຫລັງ. ການກວດເບິ່ງເບື້ອງຫລັງອັນນີ້ໄດ້ຖືກບົ່ງໃຫ້ເຮັດໂດຍກົດໝາຍຂອງລັດຫລາຍໆກົດໝາຍ, ລວມທັງກົດໝາຍ RCW 43.43.837.
2. ລາຍມືຂອງທ່ານຈະຖືກໃຊ້ເພື່ອຈະກວດເບິ່ງສຳນວນບັນທຶກປະວັດອາດສະຍາກັມທີ່ໄດ້ຖືກເກັບຮັກສາໄວ້ໂດຍກົມຕຳຣວດຂອງລັດວໍຊິງຕັນ (Washington State Patrol) (WSP) ແລະ ຫ້ອງການສືບສວນຂອງລັດຖະບານກາງ (Federal Bureau of Investigation) (FBI). ເມື່ອໃດການກວດເບິ່ງລາຍມືໄດ້ຖືກເຮັດແລ້ວ, ທ່ານຈະຂໍເອົາໃບໂກປີ້ຂອງຜົນອອກມາຂອງການເບິ່ງເບື້ອງຫລັງຂອງທ່ານໄດ້ໂດຍການຂຽນປະກອບຄຳຮ້ອງຂໍເອົາໂກປີ້ຂອງລາຍລະອຽດຂອງການກວດເບິ່ງເບື້ອງຫລັງ (Applicant Request for a Copy of Background Check Information) (DSHS 27-110). ອີງຕາມກົດໝາຍຂອງລັດທີ່ກ່ຽວຂ້ອງ,ຜົນອອກມາຂອງການກວດເບິ່ງເບື້ອງຫລັງຈະຖືກເອົາໃຫ້ບຸກຄົນນັ້ນຫລືພາກສ່ວນທີ່ໄດ້ຮ້ອງຂໍເອົາການກວດເບິ່ງເບື້ອງຫລັງຂອງທ່ານແລະຈະຖືກໃຊ້ໃນການກວດເບິ່ງເບື້ອງຫລັງໃນອະນາຄົດຂອງທ່ານຕາມທີ່ຖືກອະນຸຍາດໃຫ້ໂດຍກົດໝາຍຂອງລັດແລະລັດຖະບານກາງ.
3. ຖ້າຫາກວ່າທ່ານເຊື່ອວ່າຜົນອອກມາຂອງການເບິ່ງເບື້ອງຫລັງຂອງທ່ານບໍ່ຄົບຖ້ວນ ຫລື ຜິດພາດ, ທ່ານມີໂອກາດທີ່ຈະເຮັດໃຫ້ສຳເຣັດ ຫລື ຄັດຄ້ານຄວາມຖືກຕ້ອງແນ່ນອນຂອງລາຍລະອຽດຕາມທີ່ຖືກກ່າວຢູ່ຂ້າງລຸ່ມນີ້.

    a. ໃບແຈ້ງການກ່ຽວກັບຜົນອອກມາຂອງການກວດເບິ່ງເບື້ອງຫລັງຈະອະທິບາຍວ່າຈະດັດແປງລາຍລະອຽດໄດ້ແນວໃດຊຶ່ງຖືກເອົາໃຫ້ໂດຍແຫລ່ງລາຍງານຂອງ BCCU ທີ່ຖືກກ່າວຢູ່ຂ້າງລຸ່ມນີ້:

    - Applicant Self-Disclosure
    - Department of Corrections (DOC)
    - Department of Health (DOH)
    - Federal Bureau of Investigation (FBI)
    - Washington Courts
    - Washington State Patrol (WSP)
    - ການກະທຳທາງບໍ່ດີ: Aging and Long-Term Administration (ALTSA) / Resident and Client Protection Program; ALTSA / Adult Protective Services; Department of Children, Youth and Families (DCYF) / Child Protective Services

    b. ພາຍໃຕ້ກົດໝາຍ 28 CFR § 16.34, ມັນມີສອງຫົນທາງທີ່ຈະດັດແປງລາຍລະອຽດຢູ່ໃນບັນທຶກການຊີ້ຕົວຂອງຫ້ອງການ FBI:

    - ຕິດຕໍ່ໄປຫາຫ້ອງການຂອງລັດ ຫລື ລັດຖະບານກາງ ຫລື ຫ້ອງການຕ່າງໆບ່ອນທີ່ເອົາລາຍລະອຽດໃຫ້ຫ້ອງການ FBI; ຫລື
    - ສົ່ງໃບໜັງສືຄຳຮ້ອງຄັດຄ້ານໄປຫາພະແນກລາຍລະອຽດທາງດ້ານອາດສະຍາກັມຂອງ FBI (FBI's Criminal Justice Information Services) (CJIS) ໂດຍການຂຽນໜັງສືໄປຫາທີ່ຢູ່ຂ້າງລຸ່ມນີ້:

      FBI CJIS Division<br>
      Attention: SCU, Module D-2<br>
      1000 Custer Hollow Road<br>
      Clarksburg, WV 26306

    ໃບໜັງສືຄຳຮ້ອງຂອງທ່ານໄປຫາຫ້ອງການ FBI ຈະຕ້ອງຊີ້ບອກຢ່າງແຈ່ມແຈ້ງລາຍລະອຽດທີ່ທ່ານຮູ້ສຶກວ່າບໍ່ຖືກຕ້ອງແນ່ນອນ ຫລື ບໍ່ຄົບຖ້ວນ ແລະຈະຕ້ອງລວມເອົາໃບອັດສຳນວນຂອງຫລັກຖານ ຫລື ເອກສານທີ່ມີຢູ່ຕ່າງໆຊຶ່ງອູ້ມຊູຄຳຮ້ອງຂອງທ່ານ. ຕົວຢ່າງວ່າ, ຖ້າຫາກວ່າລາຍລະອຽດກ່ຽວກັບສິ່ງທີ່ໄດ້ເກີດຂຶ້ນຕໍ່ຂໍກ່າວຫາອາດສະຍາກັມໃສ່ທ່ານນັ້ນບໍ່ຖືກຕ້ອງ ຫລື ຂາດເຂີນ, ທ່ານຈະສົ່ງການບັນທຶກຈາກສານ ຫລື ຫ້ອງການທີ່ພິພາກສາລະດີນັ້ນມາໄດ້. ກຸ່ມທີ່ກ່ຽວຂ້ອງຈະຕິດຕໍ່ໄປຫາຫ້ອງການບ່ອນທີ່ເໝາະສົມເພື່ອຈະພະຍາຍາມທີ່ຈະພິສູດ ຫລື ດັດແປງຂໍຄວາມບັນທຶກທີ່ຖືກຄັດຄ້ານສຳລັບທ່ານ. ເມື່ອຫ້ອງການ FBI ໄດ້ຮັບການຕິດຕໍ່ເປັນທາງການແລ້ວຈາກຫ້ອງການທີ່ມີສິດອຳນາດກ່ຽວກັບເຣື່ອງນີ້, ຫ້ອງການ FBI ຈະທຳການປ່ຽນແປງທີ່ເໝາະສົມ ແລະແຈ້ງບອກທ່ານກ່ຽວກັບຜົນອອກມາ. (ການດຳເນີນການອັນນີ້ໄດ້ຖືກບັນຍາຍຢູ່ໃນກົດໝາຍ 28 C.F.R. § 16.34.)
4. ຂໍຄວາມຂອງກົດໝາຍສິດທິສ່ວນຕົວຂອງຫ້ອງການສືບສວນຂອງລັດຖະບານກາງ (FBI) ຈະມີໄວ້ໃຫ້ຢູ່ໃນແວບໄຊທ໌ຂອງ FBI ຢູ່ທີ່ https://www.fbi.gov/services/cjis/compact-council/privacy-act-statement.

**ໂດຍການເຊັນຊື່ໃສ່ໃບແຈ້ງການໃບນີ້ ຂ້າພະເຈົ້າຮັບຮູ້ວ່າ:**

ຂ້າພະເຈົ້າໄດ້ຮັບໃບໂກປີ້ຂອງໃບແຈ້ງການໃບນີ້ຍອມວ່າຂ້າພະເຈົ້າໄດ້ຖືກບົ່ງໃຫ້ມີການກວດເບິ່ງເບື້ອງຫລັງອີງຕາມລາຍມື. ບຸກຄົນ ຫລື ອົງການທີ່ໄດ້ຮ້ອງຂໍເອົາການກວດເບິ່ງເບື້ອງຫລັງໄດ້ຖືກບົ່ງໃຫ້ເກັບຮັກສາໃບໂກປີ້ຂອງໃບແຈ້ງການທີ່ຖືກເຊັນຊື່ໃສ່ແລ້ວໃບນີ້ເພື່ອເປັນບັນທຶກຂອງເຂົາເຈົ້າ ແລະ ເພື່ອຈະສົ່ງໃບແຈ້ງການສະບັບຕົ້ງເດີມກັບຄືນໃຫ້ຂ້າພະເຈົ້າ. ຂ້າພະເຈົ້າຈະຖືກແຈ້ງບອກກ່ຽວກັບຜົນອອກມາຂອງການການກວດເບິ່ງເບື້ອງຫລັງຂອງຂ້າພະເຈົ້າເມື່ອບຸກຄົນນັ້ນ ຫລື ອົງການນັ້ນທີ່ໄດ້ຮ້ອງຂໍເອົາການກວດເບິ່ງເບື້ອງຫລັງ ໄດ້ຮັບໜັງສືຂອງຜົນອອກມາຂອງການກວດລາຍມືຂັ້ນສຸດທ້າຍ.

| ລາຍເຊັນຂອງຜູ້ຮ້ອງຂໍ | ວັນທີ | ຊື່ຂຽນເປັນຕົວພິມ |
|---|---|---|
| | | |